**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ 1598 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 25 AUG 2023

**ແຈ້ງການ**

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ ແລະ ບໍລິສັດປະກັນໄພ ທີ່ນັບຖື.

**ເລື່ອງ:** ການນຳໃຊ້ລະບົບລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015;
- ອີງຕາມ ກອງປະຊຸມເຜີຍແຜ່ລະບົບລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ 100 ລ້ານກີບ, ຄັ້ງວັນທີ 15 ສິງຫາ 2023.

ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ ແລະ ບໍລິສັດປະກັນໄພໃນຂອບເຂດທົ່ວປະເທດຊາບວ່າ: ປະຈຸບັນ ສຕຟງ ໄດ້ມີການປັບປຸງລະບົບການລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ 100 ລ້ານກີບ (CTR) ຮູບແບບໃໝ່ ເພື່ອຮອງຮັບໃຫ້ແກ່ການເກັບກຳຂໍ້ມູນສະຖິຕິຢ່າງຖືກຕ້ອງ, ມີຄວາມທັນສະໄໝ, ວ່ອງໄວ ແລະ ສາມາດນຳໃຊ້ຂໍ້ມູນ CTR ເຂົ້າໃນວຽກງານການວິເຄາະຂ່າວກອງທາງດ້ານການເງິນຢ່າງມີປະສິດທິພາບ.

ສະນັ້ນ, ສຕຟງ ຈຶ່ງສະເໜີໃຫ້ທ່ານເລີ່ມຈັດຕັ້ງປະຕິບັດ ແລະ ນຳສົ່ງບົດລາຍງານ CTR ຜ່ານລະບົບໃໝ່ຢ່າງເປັນທາງການນັບແຕ່ວັນທີ 01 ກັນຍາ 2023 ເປັນຕົ້ນໄປ. ສຳລັບຂະແໜງການທີ່ຍັງບໍ່ໄດ້ສົ່ງບົດລາຍງານປະຈຳເດືອນມິຖຸນາ ແລະ ກໍລະກົດ ປີ 2023 ແມ່ນໃຫ້ນຳໃຊ້ລະບົບໃໝ່ໃນການລາຍງານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

**ວ່າການຫົວໜ້າສຳນັກງານ**

ສຳນັກງານຂໍ້ມູນຕ້ານການຟອກເງິນ

ຈິນດາໄມ ວິໄລທິງສ໌

ສອບຖາມຂໍ້ມູນເພີ່ມຕື່ມ: ພະແນກວິເຄາະຂ່າວກອງ, ສຕຟງ 021 264506